ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--===000===--

ກະຊວງການເງິນ

ເລກທີ 530 /ກງ

ນະຄອນຫຼວງວຽງຈັນ, ວັນທີ 26 FEB 2016

**ຂໍ້ຕົກລົງ**
**ຂອງລັດຖະມົນຕີວ່າການ ກະຊວງການເງິນ**
**ວ່າດ້ວຍ ການຮັບຮອງ ມາດຕະຖານການລາຍງານການເງິນ**
**ສໍາລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ**

- ອີງຕາມ ກົດໝາຍວ່າດ້ວຍ ການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ໃບສະເໜີ ຂອງກົມບັນຊີ ສະບັບເລກທີ 481/ກງ.ກບຊ, ລົງວັນທີ 7 ທັນວາ 2015.

**ລັດຖະມົນຕີວ່າການກະຊວງການເງິນ ຕົກລົງ:**

ມາດຕາ 1 ເຫັນດີຮັບຮອງເອົາ ມາດຕະຖານການລາຍງານການເງິນສໍາ ລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາ ທາລະນະເພື່ອເປັນບ່ອນອີງໃຫ້ຫົວໜ່ວຍຖືບັນຊີວິສາຫະກິດ ໃນການການສ້າງເອກະສານລາຍງານການເງິນ.

ມາດຕາ 2 ມອບໃຫ້ ກົມບັນຊີ ກະຊວງການເງິນ ເປັນເຈົ້າການໃນການເຜີຍແຜ່, ແນະນໍາ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

ມາດຕາ 3 ມອບໃຫ້ ກົມບັນຊີ ປະສານສົມທົບ ກົມສ່ວຍສາອາກອນ, ກົມຄຸ້ມຄອງການເງິນລັດວິສາຫະກິດ ແລະ ກົມວິຊາການທີ່ກ່ຽວຂ້ອງ ຊີ້ນໍາ, ຕິດຕາມ ແລະ ກວດກາ ປະເມີນຜົນການຈັດຕັ້ງປະຕິບັດມາດຕະຖານ ເປັນແຕ່ລະໄລຍະ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ປີການບັນຊີ 2017 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ດຣ ລຽນ ທິແກ້ວ